ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONGTONGSAVAT RD , BAN PHONGTONGSAVAT, CHANTHABULY DISTRICT, VTE
OFFICE TEL: (85621) 415645, FAX / TEL: (85621) 262 984 , WEBSITE.SOUVANNY.COM

ເລກທີ 040/SVN/2018
ນະຄອນຫຼວງວຽງຈັນ, ວັນທີ 21 ເມສາ 2018

**ຮຽນ:** ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ທີ່ນັບຖື.
- ນັກລົງທຶນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ທີ່ນັບຖື.

**ເລື່ອງ:** ຂໍຊີ້ແຈງລາຍລະອຽດເພີ່ມເຕີມບາງມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ2017 ໃນວາລະທີ 8 ແລະ ວາລະທີ 9

- ອີງຕາມກົດລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 22/ຕລຊລ, ລົງວັນທີ 7 ມັງກອນ 2011;

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ດຳເນີນທຸລະກິດ ເປັນຜູ້ນຳແຖວໜ້າ ໃນການຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງ ໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນ. ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຂໍຊີ້ແຈງເພີ່ມເຕີມກ່ຽວກັບມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ທີ່ໄດ້ຈັດຂຶ້ນໃນວັນທີ 06 ເມສາ 2018 ໃນວາລະທີ 8 ແລະ ວາລະທີ 9 ເພື່ອໃຫ້ສອດຄ່ອງກັບລະບຽບການເຊິ່ງໃນສອງວາລະນີ້ທີ່ໄດ້ລົງມະຕິແບບສະເພາະຢູ່ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ2017 ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄືຄະແນນສຽງທີ່ຕ້ອງໃຊ້ແມ່ນສອງສ່ວນສາມຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ຢ່າງໜ້ອຍແປດສິບສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ດັ່ງນັ້ນ, ທາງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ຈຶ່ງຂໍອະນຸຍາດລາຍງານລາຍລະອຽດເພີ່ມເຕີມຂອງວາລະທີ 8 ແລະ ວາລະທີ 9 ເຊິ່ງມີລາຍລະອຽດ ດັ່ງລຸ່ມນີ້:

**8 ພິຈາລະນາ ແລະ ອະນຸມັດການຂໍປົດບໍລິການ ສາຂາ ທົ່ງຂັນຄຳ;**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

| | | | |
|---|---|---|---|
| - ເຫັນດີ | 89 | ຄົນ (ສຽງ) | ຄິດເປັນ 100 % ຂອງຜູ້ເຂົ້າຮ່ວມປະຊຸມ ແລະ |
| ເຫັນດີ | 149.799.700 | ສຽງ | ຄິດເປັນ 90.79 % ຂອງຮຸ້ນທີ່ຖອກແລ້ວ |
| - ບໍ່ເຫັນດີ | 0 | ຄົນ (ສຽງ) | ຄິດເປັນ 0 % ຂອງຜູ້ເຂົ້າຮ່ວມປະຊຸມ ແລະ |
| ບໍ່ເຫັນດີ | 0 | ສຽງ | ຄິດເປັນ 0 % ຂອງຮຸ້ນທີ່ຖອກແລ້ວ |

**9 ພິຈາລະນາ ແລະ ອະນຸມັດຍົກເລີກການຈຳໜ່າຍໝວດສິນຄ້າ ລິບ ແລະ ຂັ້ນໄດເລື່ອນ;**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

| | | | |
|---|---|---|---|
| - ເຫັນດີ | 89 | ຄົນ (ສຽງ) | ຄິດເປັນ 100 % ຂອງຜູ້ເຂົ້າຮ່ວມປະຊຸມ ແລະ |
| ເຫັນດີ | 149.799.700 | ສຽງ | ຄິດເປັນ 90.79 % ຂອງຮຸ້ນທີ່ຖອກແລ້ວ |
| - ບໍ່ເຫັນດີ | 0 | ຄົນ (ສຽງ) | ຄິດເປັນ 0 % ຂອງຜູ້ເຂົ້າຮ່ວມປະຊຸມ ແລະ |
| ບໍ່ເຫັນດີ | 0 | ສຽງ | ຄິດເປັນ 0 % ຂອງຮຸ້ນທີ່ຖອກແລ້ວ |

ຈຶ່ງຮຽນມາຍັງທ່ານ ເພື່ອຮັບຊາບ

ດ້ວຍຄວາມເຄົາລົບ ແລະ ນັບຖື

**ປະທານສະພາບໍລິຫານ**

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

ກະຊວງ ອຸດສາຫະກຳ ແລະ ການຄ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY ນະຄອນ ຫຼວງ ວຽງຈັນ

**ທ່ານ ອຸ່ນ ຫຼ້າສຸກັນ**